ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ..12.....ຈຂ.ຊຂ

ຊຽງຂວາງ, ວັນທີ .26/10/2015

# ຄຳສັ່ງແນະນຳ

ເຖິງ: ພະແນກການ, ກົມກອງ-ອົງການທຽບເທົ່າ, ບັນດາເມືອງ, ລັດວິສາຫະກິດ ແລະ ບັນດາບໍລິສັດ ພາຍໃນແຂວງຊຽງຂວາງ.

**ເລື່ອງ**: ການສະກັດກັ້ນກຸ່ມຄົນບໍ່ດີທີ່ລັກອຸປະກອນສາຍສົ່ງໄຟຟ້າແຮງສູງ ແລະ ຫ້າມບໍ່ໃຫ້ປູກຕົ້ນໄມ້, ປຸກສ້າງສິ່ງທີ່ຢູ່ອາໄສ ຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ໃນຂອບເຂດແຂວງຊຽງຂວາງ.

- ອີງຕາມ ແຈ້ງການຂອງ ລັດວິສາຫະກິດໄຟຟ້າລາວ, ສະບັບເລກທີ 0308/ຟຟລ, ລົງວັນທີ 25/01/2013
- ອີງຕາມ ໜັງສືສະເໜີຂອງພະແນກຄຸ້ມຄອງລະບົບສົ່ງໄຟຟ້າແຂວງຊຽງຂວາງສະບັບເລກທີ 1507/ຟຟລ/ຄລສ-ຊຂ, ລົງວັນທີ 16/10/2015.

ເນື່ອງຈາກວ່າໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ໄດ້ລັກເອົາຊິ້ນສ່ວນອຸປະກອນຂອງເສົາໄຟຟ້າແຮງສູງ ເຊິ່ງເປັນຊັບສິນຂອງຊາດ, ທີ່ຜ່ານມາເສຍຫາຍເປັນຈຳນວນຫຼວງຫຼາຍ ອັນເຮັດໃຫ້ເສຍງົບປະມານໃນການສ້ອມແປງບຳລຸງຮັກສາໄປແລ້ວນັ້ນບໍ່ແມ່ນໜ້ອຍ ແລະ ມີບາງຂົງເຂດມີຕົ້ນໄມ້ອຸດສະຫະກຳທີ່ໃຫ່ຍຢູ່ກ້ອງແລວສາຍສົ່ງໄຟຟ້າແຮງສູງ ເຊິ່ງກໍ່ໃຫ້ເກີດບັນຫາໄຟຕົກໄຟມອດ, ມີການສູນເສຍພະລັງງານ ແລະ ຄັດກັບເຕັກນິກຂອງໄຟຟ້າລາວ ເຮັດໃຫ້ທາງຫ້ອງການຄຸ້ມຄອງລະບົບສົ່ງໄຟຟ້າພາກເໜືອເວົ້າລວມ, ເວົ້າສະເພາະ ພະແນກຄຸ້ມຄອງລະບົບສົ່ງໄຟຟ້າ ແຂວງຊຽງຂວາງ ພົບຄວາມຫຍຸ້ງຍາກໃນການຄຸ້ມຄອງຕິດຕາມກວດກາ, ສະນັ້ນໃຫ້ທຸກພາກສ່ວນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມືໃນການສະກັດກັ້ນບັນຫາດັ່ງກ່າວ.

**ເຈົ້າແຂວງ-ແຂວງຊຽງຂວາງ ອອກຄຳສັ່ງ:**

1. ໃຫ້ທຸກພາກສ່ວນແຕ່ແຂວງຈົນຮອດຮາກຖານ ຮ່ວມມືກັນໃນການຕິດຕາມກຸ່ມຄົນບໍ່ດີທີ່ຫວັງທຳລາຍ ຫຼື ລັກອຸປະ ກອນສາຍສົ່ງໄຟຟ້າແຮງສູງ.
2. ໃຫ້ເຈົ້າເມືອງແຕ່ລະເມືອງອອກແຈ້ງການເຜີຍແຜ່ຄຳສັ່ງແນະນຳສະບັບນີ້ໃຫ້ແຕ່ລະກົມກອງ, ກຸ່ມບ້ານ, ບ້ານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຊາບ ເພື່ອຕິດຕາມ-ກວດກາການເຄື່ອນໄຫວຂອງກຸ່ມຄົນບໍ່ດີ.
3. ຫ້າມບໍ່ໃຫ້ບັນດາຮ້າງຮ້ານຕ່າງໆ, ວິສາຫະກິດ, ບໍລິສັດ, ບຸກຄົນ ເກັບຊື້ເກັບຂາຍ ອຸປະກອນເສົາໄຟຟ້າແຮງສູງ ຈາກກຸ່ມຄົນບໍ່ດີທີ່ລັກເອົາມາຂາຍໃຫ້ຢ່າງເດັດຂາດ ຖ້າຫາກຜູ້ໃດຫາກບໍ່ປະຕິບັດຈະຖືກປັບໃໝ ແລະ ດຳເນີນຄະດີຕາມລະ ບຽບກົດໝາຍ.

4. ໃຫ້ບັນດາບ້ານເອົາໃຈໃສ່ຕິດຕາມ-ກວດກາ ເບິ່ງບັນດາຮ້ານທີ່ເກັບຊື້ເຫຼັກເສດຕ່າງໆ, ບໍ່ໃຫ້ມີອຸປະກອນເສົາໄຟຟ້າແຮງສູງໄວ້ໃນຄອບຄອງ.
5. ໃຫ້ບ້ານຮັບຊາບໃນກໍລະນີຫາກພົບເຫັນຜູ້ກະທຳຜິດແບບຕໍ່ໜ້າຕໍ່ຕາ ແມ່ນສາມາດຈັບກຸມຕົວພ້ອມຂອງກາງນຳມາມອບໃຫ້ເຈົ້າໜ້າທີ່ດຳເນີນຄະດີຕາມລະບຽບກົດໝາຍ.
6. ໃຫ້ບ້ານແຈ້ງຕໍ່ພໍ່ແມ່ປະຊາຊົນພາຍໃນບ້ານຮັບຊາບຫ້າມບໍ່ໃຫ້ປຸກສ້າງທີ່ຢູ່ອາໃສ, ຕົ້ນໄມ້ ແລະ ອື່ນໆຢູ່ກ້ອງແລວສາຍສົ່ງ ທີ່ຄັດຕໍ່ມາດຕະຖານເຕັກນິກໄຟຟ້າຂອງລາວຢ່າງເດັດຂາດ ເພື່ອຄວາມປອດໄພ ແລະ ສະດວກໃນການຕິດຕາມກວດກາ, ຖ້າບຸກຄົນໃດຫາກລະເມີດແມ່ນຈະບໍ່ມີຄ່າຊົດເຊີຍແຕ່ຢ່າງໃດເລີຍ.
7. ຖ້າຫາກພົບເຫັນປະກົດການທີ່ກ່າວມາຂ້າງເທິງນັ້ນ ແມ່ນໃຫ້ລາຍງານຕໍ່ພະແນກຄຸ້ມຄອງລະບົບສົ່ງໄຟຟ້າແຂວງຊຽງຂວາງ( ໂທ: 061 213 485 ) ຫຼື ລາຍງານຕໍ່ເຈົ້າໜ້າທີ່ ທີ່ຢູ່ໃກ້ຄຽງຢ່າງຮີບດ່ວນ.
8. ໃຫ້ບັນດາພະແນກການ, ກົມກອງ-ອົງການທຽບເທົ່າ, ລັດວິສາຫະກິດ ແລະ ບັນດາເມືອງ ໃນທົ່ວແຂວງຊຽງຂວາງຈົ່ງໃຫ້ການຮ່ວມມື ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
9. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ-ແຂວງຊຽງຂວາງ

ດຣ.ຄຳປາວ
Dr. Khampao